# ຂໍ້ມູນກ່ຽວກັບ ແຂວງຫຼວງພະບາງ

- ຄວາມຮູ້ທົ່ວໄປກ່ຽວກັບການທ່ອງທ່ຽວແຂວງ
- ເຂດປ່າສະຫງວນແຫ່ງຊາດ ນ້ຳແອດ-ພູເລີຍ
- ວັດທະນາທຳລາວ
- ລາຍລາວ
- ປະຊາຊົນບັນດາເຜົ່າຕ່າງໆ
- ຖ້ຳຕິງ
- ປະຫວັດສາດ



ຄູ່ມືຝຶກອົບຮົມ *ສຳລັບ* ພະນັກງານນຳທ່ຽວຂັ້ນແຂວງ (2004)

LAO NATIONAL TOURISM AUTHORITY

LNTA-ADB
Mekong Tourism Development Project

SNV
Connecting People's Capacities

ສົມ ພຣະໄຊຍະມົງຄຸນ (ສາຍັນດົງແດງ )
ຮຽບຮຽງ ແລະຮວບໂຮມ

# ສັງເຂບ
# ອານາຈຳປາສັກດິ໌ ແຕ່ ບູຮານ ຫາ ໑໙໕໐ .

ສະຫງວນລິຂະສິດ
໒໐໐໔

## ອານາຈຳປາສັກດິ໌ ແຕ່ ສະໄມບູຮານ ຫາ ໑໗໕໐ .

ຕາມປະຫວັດເດີມແລ້ວ ແຄວ້ນຈາມປານະຄອນ ໃນສະໄໝເກືອບພັນປີຜ່ານມາ ມີອານາເຂດກວມເອົາ ຫວຽດນາມພາກໃຕ້ ຂະແມ ພາກອີສານຂອງໄທ ແລະສ່ວນໜຶ່ງຂອງປະເທດລາວ ນັບແຕ່ແຂວງວຽງຈັນລົງໄປ. ເຄີຍເປັນສູນກາງການປົກຄອງ ວັດທະນະທຳ ສັງຄົມຊຸມຊົນບູຮານມາແລ້ວ ແຕ່ 100 ປີກ່ອນ ຄ.ສ. ນັກປາດລາວທາງ ປວັດສາດບາງທ່ານກ່າວວ່າ ຜູ້ທີ່ມາກໍ່ຕັ້ງເມືອງຢູ່ແຫ່ງນີ້ໄດ້ແກ່ຊົນຊາດຜູ້ເປັນເຈົ້າຂອງແຜ່ນດິນ ແຫ່ງອານາຈັກ ເຊິ່ງຊາວຈີນສະໄໝນັ້ນຮຽກຊື່ໃຫ້ວ່າ **ເຈນລະ** ເຊິ່ງເປັນຊື່ທີ່ຄ້າຍໆຄືກັນກັບຄວາມວ່າ **ຈາມ** ເມື່ອ ຄ.ສ 545. ເຈົ້າແຜ່ນດິນຜູ້ກໍ່ຕັ້ງ ອານາຈັກກ່ອນໝູ່ອົງທຳອິດ ໄດ້ແກ່ ພະເຈົ້າ ຣຸທຣະວໍຣະມັນ ຮຽກຊື່ຣາຊະທານີຕົນເອງວ່າ **ສະມະພູ** ຫຼື ສົມພູປູຣະ ( ຕໍ່ມາລາວເຮົາຮຽກວ່າເມືອງ ສຽມໂບກ ຫຼືຝຣັ່ງຮຽກວ່າ SAMBOR ) ຕັ້ງຢູ່ເຂດແຂວງຈຳປາສັກ ໃກ້ກັບວັດພູໃກ້ກັບ ວັດພູ[1].

- ອ້າງຕາມ ປະຫວັດການສ້າງວັດພູຂອງ ທ່ານ ຮັງຣີ ມາກຊາລລ໌ ( HENRI MARSHALL ) ນັກປາດທາງບູຮານວິທະຍາຝຣັ່ງກ່າວວ່າ ແມ່ນພະເຈົ້າ ທຣະວະຣະມັນ ສ້າງຂຶ້ນໃນທ້າຍສະຕະວັດ ທີ 4 ປະມານ ຄ.ສ 390 ຫາ 400 ເພື່ອເປັນກຽດແກ່ພະ ສີວະ ໃນນາມ ພະ **ທະຣະ** ( ຜູ້ລ້າງຜານ DESTRUCTEUR ) ຫຼື ພະ **ສະວະຕະ** ( ຜູ້ເປັນເຈົ້າແຫ່ງຜີ ROI DE L’ENFER ). ແຕ່ໃນສີລາຈາລຶກ ພາສາສັນສະກິດ ທີ່ພົບເຫັນຢູ່ຫ້ວຍສະຫົວກ່າວວ່າ : ພະເຈົ້າ ທຣະວະຣະມັນ ສ້າງຂຶ້ນເພື່ອຖະວາຍະສີວະ ແລະໃຫ້ຊື່ເມືອງນີ້ວ່າ **ລິງຄະປະຣະວະຕະ** ອັນໝາຍເຖິງພູ **ລິງຄະ** ເຊິ່ງເອົານິມິດໝາຍໂງ່ນຫີນທັມມະຊາດ ຈອມພູເກົ້າ ເປັນຫຼັກສືບມາຮອດປັດຈຸບັນ.

- ກະສັດອົງຕໍ່ມາ ນາມວ່າ ໄຊຍະວໍຣະມັນ ທີ່1 ຂຶ້ນຄອງຣາຊປີໃດກັນແທ້ນັ້ນ ບໍ່ຊາບ ບອກແຕ່ວ່າສະຫວັນນະຄົດໃນ ຄ.ສ 514 ຈຶ່ງມຣາຊະໂອຣົດສືບຂັດຕິຍາວົງແທນ.

- ຕົກມາໃນຄ.ສ 525 ພະເຈົ້າຈິດຕະເສນ ວໍຣະມັນ ຢູ່ເມືອງອັງກໍບໍເລີຍ ໄດ້ມາເປັນໃຫ່ຽໃນນະຄອນສະມະພູ. ເມື່ອພະອົງສະຫວັນນະຄົດ ພະເຈົ້າອີສານວະຣະມັນ ໄດ້ປົກຄອງແທນພໍ່ມາຮອດ ຄ.ສ 600 ພະອົງໄດ້ສ້າງເມືອງໃໝ່ ຊື່ວ່າ ອະສານປຸຣະ ( ອີສານບູຣີ ) ຢູ່ແຄມຝັ່ງ **ນ້ຳ ເສນ ຫຼືນ້ຳ ກະຕິງເສນ**

[1] ເມືອງເບິ່ງຕາມການສັນນິຖານຂອງທ່ານ ມະຫາສີລາ ວິຣະວົງ ໃນປຶ້ມ ພົງສາວະດານລາວສະບັບປຸງໃໝ່ ພິມເມື່ອ ຄ.ສ 2000 ເຫັນວ່າ ບໍ່ຖືກຕາມເປົ້າໝາຍປານໃດ ເພາະເມືອງ ສຽມໂບກປັດຈຸບັນແມ່ນຕັ້ງຢູ່ທາງໃຕ້ແຂວງຈຳປາສັກ ໃນປະເທດກັມພູຊາ ໃຕ້ແຂວງ ຊຽງແຕງລົງໄປອີກຫຼາຍຮ້ອຍກິໂລແມັດ

**ໃຕ້ນະຄອນ ຈາມປາສັກ**[2] ແລ້ວພະອົງກໍຄອງເມືອງນີ້ມາຕະຫຼອດຈົນສິ້ນ ຣາຊະສະໄໝຂອງພະອົງ. ໃນຣາຊະການຂອງພະອົງນີ້ເອງ ມີຣາຊະທູດຈີນ ຣາຊວົງຖັງ ເຊິ່ງເປັນທັງນັກປະຫວັດສາດ ເດີນທາງມາຈະເລີນສັມພັນທະໄມຕຣີກັບອານາຈັກ ເຈນລາ ສະໄໝນັ້ນ ບັນທຶກຂໍ້ຄວາມກ່ຽວຊີວິດຊາວເມືອງໄວ້ວ່າ: *ໃນເມືອງຫຼວງຂອງ ເຈນລະນີ້ ມີເຮືອນປະມານ ສອງໝື່ນຫຼັງ ກາງເມືອງມີຫໍໂຮງຫຼັງໃຫຍ່ ເປັນທີ່ປະທັບຂອງກະສັດ ມີເມືອງຂຶ້ນເຖິງ ສາມສິບ ( 30 ) ເມືອງ ແຕ່ລະເມືອງ ມີເຮືອນຫຼາຍພັນຫຼັງ ແລະເມືອງໃດກໍມີເຈົ້າອົງໜຶ່ງປົກຄອງ. ຂ້າຣາຊະການແບ່ງອອກເປັນ ຫ້າຊັ້ນ ຂຸນນາງເຫຼົ່ານີ້ເມື່ອເຂົ້າເຝົ້າເຈົ້າແຜ່ນດິນ ຕ້ອງກົ້ມຫົວລົງຈຸພື້ນ ຊື່ໜ້າຂັ້ນໄດ ພະທີ່ນັ່ງສາມເທື່ອ. ເມື່ອເປີກສາຣາຊະການຈົບແລ້ວ ກໍນັ່ງຄຸເຂົ່າກົ້ມລົງເອົາຫົວຈຸພື້ນ ແລ້ວຈຶ່ງອອກມາ. ໃນບໍລິເວນພະທີ່ນັ່ງທົ່ວໄປ ໄດ້ມີທະຫານຮັກສາພະອົງ ສຸບເກາະ ແລະຖືຫອກຍາວຢືນຮັກສາຢູ່. ບັນດາປະຊາຊົນພວກຜູ້ຊາຍ ມີຮູບຮ່າງນ້ອຍ ແລະມີຜິວກາຍດໍາກໍ່າ ແຕ່ພວກຜູ້ຍິງ ຜິວກາຍຂາວຈັກໜ່ອຍ. ປະຊາຊົນ ເກົ້າຜົມ ແລະໃສ່ຕຸ້ມຫູທ່າທາງວ່ອງໄວ ແຂງແຮງ ອາບນໍ້າທຸກເຊົ້າ ແລະໃຊ້ງ່າໄມ້ນ້ອຍຖູແຂ້ວ*[3]. *ອາຫານການກິນ ສ່ວນຫຼາຍໃຊ້ເຂົ້າສານ ແລະເຂົ້າຂວ້າງ ໃຊ້ນົມ ແລະເນີຍເຮັດເຂົ້າໜົມແນວໜຶ່ງກິນ. ບໍລິເວນພື້ນທີ່ຂອງອານາຈັກຕອນເໜືອ ເປັນຫ້ວຍເຫວ ແລະທ່ອມພູ. ທາງເຂດໃຕ້ເປັນທີ່ຮາບຕໍ່າ ແລະມີບຶງໃຫຍ່ ອາກາດບໍ່ສູ້ສະບາຍປານໃດ ຕາມທີ່ຮາບປູກເຂົ້າເປັນສ່ວນຫຼາຍ. ໃນລະດູເດືອນຫ້າ ຫາເດືອນຫົກ ມີພາຍຸຮ້າຍພັດມາສະເໝີ ປະຊາຊົນຕ້ອງຂ້າແກະ ແລະໝູບູຊາທີ່ຜີກຕູເມືອງທາງຕາເວັນຕົກ ເພື່ອເປັນການປັດເປົ່າໄພພິບັດ ອັນເກີດຈາກພາຍຸຮ້າຍໃຫ້ເບົາບາງລົງ ບໍ່ດັ່ງນັ້ນ ເຂົ້າຈະບໍ່ທັນແກ່ ບັນດາຄົນ ແລະສັດລ້ຽງຈະໄດ້ຮັບອັນຕະລາຍ ແລະໃກ້ກັບນະຄອນ ອີສານປຸຣະມີພູນ້ອຍໆໜ່ວຍໜຶ່ງ ເທິງຈອມພູນັ້ນໄດ້ສ້າງ ເທວາໄລໄວ້ ແລະທີ່ເທວາໄລນີ້ ໄດ້ມີທະຫານຈໍານວນພັນຢູ່ປະຈໍາ ຕ້ອງຂ້າຄົນບູຊາຍັນ. ພະເຈົ້າແຜ່ນດິນຕ້ອງສະເດັດໄປທໍາການບູຊາຍັນ ທີ່ເທວາໄລນັ້ນດ້ວຍພະອົງເອງ ໃນເວລາກາງຄືນທຸກໆປີ.*

ຕາມພົງສາວະດານສ່ວຍກ່າວວ່າ: *ຢູ່ໃກ້ນະຄອນຫຼວງມີພູໜ່ວຍໜຶ່ງຊື່ວ່າ ລິງກະຍະໂປໂປ ( ລິງຄະປະຣະວະຕະ ) ທີ່ຈອມພູນັ້ນມີຜາສາດຫຼັງໜຶ່ງ ມີທະຫານພັນຄົນຮັກສາການຢູ່ເປັນປະຈໍາ. ຜາສາດຫຼັງນີ້ແມ່ນສ້າງຖະຫວາຍ ແກ່ເທບພະເຈົ້າອົງໜຶ່ງຊື່ ໂປໂຕລິ ( ພູເຕສະວະຣະ ) ໂດຍມີການຂ້າຄົນ ເປັນເຄື່ອງ ບູຊາຍັນທຸກໆປີ. ພະເຈົ້າແຜ່ນດິນສະເດັດໄປຍັງຜາສາດ ເພື່ອທໍາ ບູຊາຍັນ ດ້ວຍພະອົງເອງທຸກໆປີ ໃນເວລາກາງຄືນ .*

- ເມື່ອມາເຖິງ ພະເຈົ້າໄຊຍະວໍຣະມັນທີ 1 ຂຶ້ນຄອງຣາດໃນ ຄ.ສ 650 ພະອົງໄດ້ສັ່ງໃຫ້ ພຣາມມ໌ຜູ້ໜຶ່ງ ຊື່ ທິວາກອນ ເປັນນາຍຊ່າງສ້ອມແປງ ຫໍພະສິວະ ທີ່ເຂົາພະນົມ ດັງເຣັກ ຜາສາດເຂົາ ພະວິຫານ – ແລະ ວວິຫານ ເທິງວັດພູອີກດ້ວຍ. ໄລຍະຕໍ່ມາ ພະອົງເລີຍຍ້າຍໄປຢູ່ເມືອງ ອັງກໍບໍເຣີຍ ແຕ່ພະອົງກໍຍັງຮັກເມືອງຫຼວງເກົ່າໄວ້ຢູ່.
- ອ້າງຕາມສີລາເລກ ວັດຫຼວງດເກົ່າ ເມືອງຈໍາປາສັກ ຂຍນໄວ້ວ່າ ກະສັດອົງຕໍ່ມາ.... “ ຣາຊາທິຣາຊ ເທວະນິກະ ... ສະເດັດມາຈາກເມືອງໄກ ໄດ້ຖືກສິ່ງສັກສິດໃນນະຄອນ ລິງຄະ ປະຣະວະຕະ ອະພິເສກໃຫ້ພະອົງ ”. ປະກົດວ່າ ພະເຈົ້າເທວະນິກະໄດ້ສະເຫວີຍຣາດ ຢູ່ນະຄອນ ໄຊຍະຕິດຖະປຸຣະ ຄືເມືອງທ່າໄຊ[4] ໃນນິຍາຍ ນາງ ອໍຣະພິມນັ້ນເອງ. ສີລາຈາລຶກແຜ່ນໜຶ່ງ ຂຽນຂຶ້ນ ທ້າຍສະຕະວັດທີ 12 ກ່າວວ່າ “ ພະເຈົ້າ ເຊດຖາ ວໍຣະມັນ ເກີດທີ່ເມືອງ ໄຊຍຕິດຖະປຸຣະ ເປັນເຊື້ອຣາຊະວົງ ສຣູຕະວໍຣະມັນ ”

ເຖິງຢ່າງໃດກໍຕາມ ປະຫວັດຄວາມເປັນມາຂອ

---

[2] ອາດຈະແມ່ນແມ່ນໍາຂອງ ຫຼື ຫ້ວຍສະຫົວໃກ້ກັບວັດພູ ປັດຈຸບັນ.

[3] ຕາມຄວາມເຫັນຂອງມະຫາ ສີລາ ວິຣະວົງວ່າ ລັກສະນະທ່າທາງຢ່າງນີ້ ເຫັນຈະແມ່ນພວກຈາມແທ້.

[4] ຕໍານານຂອງ ພະເຈົ້າ ເທວະນິກະ ຄ້າຍຄືເລື່ອງ ນາງອໍຣະພິມ ກັບທ້າວບາຈິດ ທີ່ມີຄວາມກ່ຽວພັນກັບວັດພູ ເຊິ່ງນັກປະພັນລາວສະໄໝລ້ານຊ້າງຮຸ່ງເຮືອງຂຽນຂຶ້ນ.

ເມືອງ ຈາມປານະຄອນສະໄໝບູຮານນັ້ນ ທາງປະຫວັດດ ຕຳນານ ແລະພົງສາວະດານກ່າວໄວ້ພຽງເທົ່ານີ້ ແຕ່ເມື່ອພະເຈົ້າ ໄຊຍະວໍຣະມັນທີ ໘ ໄດ້ສະຖາປະນາຕົນເປັນກະສັດຂອງອານາຈັກເຈນລາບົກ ແລະເຈນລານ້ຳ ມີລະບົບການປົກຄອງທີ່ເຂັ້ມແຂງ ແລະຢືນຕົວເປັນເອກະຣາດມາໄດ້ ແຕ່ ຄ.ສ ໗໐໘ ເປັນຕົ້ນມາ ໂດຍໂຮມເອົາ ແຄວ້ນ ເຈນລາ ນ້ຳ ແລະເຈນລາບົກເປັນ ອານາຈັກອັນໜຶ່ງອັນດຽວມີຊື່ວ່າ: **ກັມພູຊາທິສະ** ( ອິນທະປັດ ) ໂດຍແມ່ນ ອັງກໍວັດເປັນຣາຊະທານີ. ອານາຈັກນີ້ໄດ້ຮິບໂຮມເອົາທິວເມືອງ ຈາກ ອານາຈັກ ເຈນລານ້ຳ ເຈນລາບົກເຂົ້າກັນດ້ວຍຄວາມຍາກລຳບາກນັ້ນ **ກ່ອນຈະສາມາດກວດກາແຄວ້ນຈຳປາສັກ ແລະໂຄຣາດໄດ້ ຕ້ອງແກ່ຍາວມາຮອດ ສະຕະວັດທີ 10 ພີ້.**

***ອານາຈັກ ກັມພູຊາ ( ອິນທະປັດ ) ມີອານາເຂດກວມເອົາຮອດ ອານາຈັກ ຈາມປາທັງໝົດໃນເຂດຕາເວັນອອກ ຈົ່ອານາຈັກນ່ານເຈົ້າ ທາງເຂດເໜືອ ແລະຄຸງແມ່ນ້ຳເຈົ້າພະຍາທາງທິດຕາເວັນຕົກ ກວມເອົາປະເທດຂະເໝນທັງໝົດໃນສະຕະວັດ ທີ 10 ຮອດເຂດຕາເວັນຕົກຂອງແຄວ້ນ ໂກແຊ້ງຊິນ ເຂດຕາເວັນອອກຂອງສະຫຼາມ ແລະແຂວງຈຳປາສັກ ປັດຈຸບັນ.... ດັ່ງນັ້ນ ດິນແດນຈຳປາສັກ ຈຶ່ງເປັນຂອງຂະເໝນຈົນຮອດ ລ່ອງ ເຊໂດນ .... ແລະຖືກຂະເໝນຄອບຄອງມາຮອດສະຕະວັດທີ ໑໔ . ແຕ່ພວກຂະເໝນບໍ່ສາມາດກຳອຳນາດໄວ້ນະທີ່ນີ້ໄດ້ນານພໍເທົ່າໃດ*** ( B.N Lafont " Apercu sur le Laos " P. 17 a 20 ) ***ກໍໝົດອຳນາດລົງ.***

ຮອດສະຕະວັດທີ ໑໔ ເຈົ້າຟ້າງຸ່ມທີ່ກັບຄືນມາຢຶດ ຣາຊະອານາຈັກຂອງພະບິດາ ໂດຍຍົກທັບຈາກເມືອງອິນທະປັດ ຂຶ້ນມາຕາມລຳແມ່ນ້ຳຂອງ ພ້ອມທັງຕີເອົານະຄອນຈຳປາສັກໄດ້ ຫຼັງຈາກທີ່ພະອົງຂຶ້ນຄອງຣາດໃນ ຄ.ສ ໑໓໕໓ ແລະປະກາດຕົນເປັນກະສັດລ້ານຊ້າງນັ້ນ ອານາຈັກຂອງພະອົງມີ ອານາເຂດກວມເອົາແຕ່ <u>**ແກ້ງຫຼີ່ຜີ**</u> ທາງໃຕ້ ຮອດ <u>**ເມືອງຊຽງໃໝ່**</u> ທາງພາກຕາເວັນອອກສ່ຽງເໜືອ ຊ້າຍສວຍລົງມາທາງທິດໃຕ້ ໂດຍເອົາ <u>ສາຍພູພະຍາໄຟ</u> ທາງພາກຕາເວັນຕົກ ສ່ວນທາງພາກເໜືອສຸດ ໝາຍເອົາຜາໄດຜາດ່າງ ຫີນສາມເສົ້າ ນ້ຳເຕົ້າສາມແຄວຕໍ່ລົງສາຍພູແດນແກວໄມ້ລົ້ມແບ່ງ ທາງທິດຕາເວັນອອກຈຸບ້ານແມ່ທວດ ກວາງຕຸ້ມ ແລະ ເຢັງລາຍ.

ໝາຍຄວາມວ່າ ເມືອງຈາມປານະຄອນມີຊື່ຈະແຈ້ງ ຢູ່ໃນອານາຈັກລ້ານຊ້າງເປັນຕົ້ນມາແມ່ນໃນສະໄໝຂອງພະເຈົ້າຟ້າງຸ່ມມະຫາຣາດທ້ອນໂຮມແຜ່ນດິນລ້ານຊ້າງ ເຊິ່ງພະອົງຖືວ່າເປັນເມືອງສຳຄັນ ເທົ່າກັບເມືອງກະບອງ ເມືອງຮ້ອຍເອັດ.

ຕາມຕຳນານພື້ນບ້ານພື້ນເມືອງ ຊາວຈຳປາສັກ ທີ່ກ່າວເຖິງການສ້າງວັດພູວ່າ: ກະສັດຜູ້ປົກຄອງ ເມືອງ ຈາມປານະຄອນ ໄດ້ແກ່ ທ້າວຄັດຊະນາມ ຕໍ່ມາຈຶ່ງເຖິງ ພະຍາກັມມະທາ. ເມື່ອສິ້ນຣາຊະການພະຍາກັມມະທາແລ້ວ ມີເຈົ້າ ຂະເໝນອົງໜຶ່ງ ຍົກພົນມາຕີເອົາ ເມືອງ ຈາມປານະຄອນແລ້ວຕັ້ງຊື່ຂຶ້ນວ່າ ເມືອງ ***ກາລະຈຳປາ ກະນາຄະ ບຸຣີສີ.*** ເຈົ້າຂະເໝນອົງນັ້ນປົກຄອງເມືອງມາຮອດ ສະໄໝ ເຈົ້າ ສຸທັດ ຣາຊາ ຄູອງເມືອງມາຮອດ ຄ.ສ 162 ຄ.ສ ໑໗໘໗. ເມື່ອເຈົ້າ ສຸທັດຣາຊາ ສັຍງພະຊົນ

ແລ້ວ ເລີຍບໍ່ມີຜູ້ສືບເມືອງ ແລະເວັ້ນວ່າງກະສດຢູ່ເຖິງ 10 ປີ. ເມື່ອມາຮອດ ຄ.ສ 1638 ຊາວເມືອງຈຶ່ງພ້ອມກັນເອົາຊາຍຜູ້ໜຶ່ງຂຶ້ນເປັນເຈົ້າຄອງເມືອງ. ແຕ່ເມືອຊາຍຜູ້ຄອງເມືອງນັ້ນ ເສັຽຊີວິດ ເລີຍບໍ່ມີລູກຊາຍສືບແທນ ມີແຕ່ລູກສາວຊື່ວ່ານາງເພົາໆຈຶ່ງໄດ້ຄອງເມືອງສືບແທນພໍ່ມາ.

ໃນປີ ຄ.ສ ໑໖໔໑ ທ່ານ ແຊຣິດ ວັນວຸສໂຕຟ ໄດ້ເດີນທາງຜ່ານມາທາງຈຳປາສັກ ແລ້ວໄດ້ບັນທຶກເຖິງການຕ້ອນຮັບຂອງເຈົ້າຈຳປາສັກວ່າ *ເປັນຊຸນນາງຂັ້ນພະຍາຂັ້ນໜຶ່ງສຳຄັນທາງພາກໃຕ້ ທີ່ທາງສູນກາງວຽງຈັນຄື ເຈົ້າ ສຸຣິຍະວົງສາ ກະສັດລ້ານຊ້າງ ໄດ້ໃຫ້ຄວາມສຳຄັນແກ່ນະຄອນນີ້ຢູ່ແລ້ວ.*

ຕາມພົງສາວະດານເມືອງຈຳປາສັກກ່າວໄວ້ວ່າ ໃນປີຈຸລະສັງກາດ 1 000 ( ຄ.ສ 1638 ) ເຈົ້າຄອງນະຄອນຈຳປາສັກສະຫວັນນະຄົດ ມີແຕ່ລູກສາວຊື່ນາງເພົາ ເປັນຜູ້ຢູ່ໃນວົງຕະກຸນພະຍາ. ອີງຕາມທັມນຽມແລ້ວ ຣາຊະທາຍາດຝ່າຍຍິງບໍ່ມີສິດສືບຣາຊະການແທນພະບິດາ ດັ່ງນັ້ນ ວຽກບ້ານການເມືອງທັງໝົດ ຈຶ່ງຕົກເປັນຝ່າຍເສນາມຸນຕີຮັກສາການແທນ. ເວລານັ້ນມີເຈົ້າ **<u>ປາງຄຳ</u>** ເຊິ່ງເປັນເຊື້ອພະວົງທາງວຽງຈັນ ມາເຝິກຍຸດທະຫັດຖີຢູ່ບ້ານໜອງບົວລຳພູ ເຊິ່ງເປັນເຂດປາຍດ່ານຂອງລ້ານຊ້າງ ໄດ້ພາໄພ່ພົນມາຄ້ອງຊ້າງທີ່ເຂດ ເມືອງ ***ກາລະຈຳບາກນາຄະບຸຣີສຣີ***[5] ແລະໄດ້ມາພັກເຊົາຢູ່ເມືອງນີ້ເປັນ ເວລາຫຼາຍມື້. ຂະນະທີ່ປະທັບຢູ່ນັ້ນ ເລີຍໄດ້ເປັນຊູ້ກັບກັບນາງ ເພົາ ລູກສາວຂອງພະຍາເມືອງທີ່ຍັງເປັນໂສດຢູ່. ຈາກນັ້ນ ທ້າວ ປາງຄຳ ເລີຍລາກັບໜອງບົວລຳພູ ພ້ອມດ້ວຍໄພ່ພົນ.

ຢູ່ມາ ນາງເພົາເລີຍຖືພາ ຂະນະທີ່ຖືພາຢູ່ນັ້ນ ນາງເກີດເປັນທຸກຫຼາຍ ນາງຮູ້ສຶກອາພາດ ບໍ່ວ່າທາງດ້ານຮ່າງກາຍ ແລະຈິດໃຈ ຍ້ອນລູກໃນທ້ອງທີ່ຈະເກີດມານັ້ນຈະບໍ່ມີພໍ່ ນາງຈຶ່ງຕັ້ງຄຳສາບໄວ້ວ່າ:

***- " ຖ້າຍິງສາວຜູ້ໃດ ຫາກຫຼິ້ງຫຼິ້ນຊູ້ ຈົນມານທາງ ຍິງຜູ້ນັ້ນຕ້ອງເສັຽຄວາຍໂຕໜຶ່ງ ເພື່ອບະຜີເມືອງ ! ສ່ວນຜູ້ເປັນຊາຍຊູ້ ຕ້ອງເສັຽເງິນຄ່າມານຕາມທຳນຽມ ! ຖ້າບໍ່ປະຕິບັດດັ່ງນີ້ ໃຫ້ເຂົ້າໃນນາຕາຍຄາຮວງ ! ນ້ຳໃນນາໃຫ້ບົກແຫ້ງ ເກີດແລ້ງຝົນບໍ່ຕົກ ແລະເຂົ້າໃນນາກໍໃຫ້ຈິບຫາຍວາຍວອດ ".***

ຫຼັງຈາກນາງປະສູດລູກອອກມາ ເປັນຍິງ ຈຶ່ງໃຫ້ຊື່ວ່າ ນາງແພງ. ນາງເພົາຜູ້ເປັນມານດາ ຈຶ່ງມີອາດຍາໃຫ້ເຈົ້ານາຍເມືອງນະຄອນ ກາລະຈຳບາກນາຄະບຸຣີສຣີ ເອົາຄຳສາບດັ່ງກ່າວ ໃຊ້ເປັນກົດລະບຽບທາງປະເພນີ ນຳໃຊ້ກັນທົ່ວແຜ່ນດິນຈຳປາສັກ.

ຂະນະທີ່ທ່ານ ວັນວຸສໂຕຟ ກາຍມາແວ່ຍາມນະຄອນຈຳປາສັກນັ້ນ ສາມ ປີ ທ່ານໄດ້ພົບເຈົ້າຍິງອົງໜຶ່ງ ທີ່ເປັນແຕ່ພຽງຜູ້ຕາງໜ້າເຈົ້າຄອງນະຄອນເທົ່ານັ້ນ. ແຕ່ເຖິງແນວໃດກໍດີ ນັກປະຫວັດສາດລາວໄທແລະຝຣັ່ງ ກໍບໍ່ປະຕິເສດໃນການບັນທຶກຂອງຊາວຕ່າງດ້າວດັ່ງກ່າວ ແຕ່ພວກເພິ່ນຍັງກ່າວວ່າ ນາງເພົາ ເປັນພະຍາຄອງເມືອງທີ່ຖືກຕ້ອງຕາມວົງກະສັດແທ້. ນາງໄດ້ຄອງເມືອງມາດົນແລ້ວ ຈຶ່ງມອບເມືອງ

[5] ເມືອງ ກາລະຈຳບາກ ນາຄະ ບຸຣີສຣີ ຫຼືເມືອງ ຈຳປານະຄອນ ເປັນຊື່ເດີມຂອງ ອານາຈັກຈຳປາສັກມາແຕ່ ສະຕະວັນທີ ໑໔ ພຸ້ນ

ໃຫ້ແກ່ພະຄູ ໂພນສະເມັກ ແລ້ວຕໍ່ມາ ພະຄູໄດ້ມອບເມືອງໃຫ້ເຊື້ອພະວົງອົງໜຶ່ງ ທີ່ຕິດຕາມມາກັບພະຄູເອງ ຈາກນະຄອນວຽງຈັນ ໃຫ້ມາເປັນເຈົ້ານະຄອນຈຳປາສັກ ຊົງພະນາມວ່າ ເຈົ້າໜໍ່ກະສັດ ເຊິ່ງເປັນຜູ້ກໍ່ຕັ້ງ ຣາຊະວົງໃໝ່ຂອງນະຄອນ **ກາລະຈຳປາກນາຄະບຸຣີສຣີ.**

ທ່ານ ຫຼຸຍ ອະໄພ ໄດ້ໃຫ້ ທັດສະນະຕາມບົດຂຽນຂອງທ່ານໃນຫົວເລື່ອງ " ອານາຈັກຈຳປາສັກ " ວ່າ: ກະສັດອົງທຳອິດ ທີ່ຂຶ້ນຄອງຣາດນະຄອນ ກາລະຈຳປາກ ນາຄະບຸຣີສຣີ ໄດ້ແກ່ **ເຈົ້າໜໍ່ກະສັດ** ເປັນ ພະອະນຸຊາກັບເຈົ້າອົງຫຼໍ່ ( ຊື່ໜຶ່ງວ່າ ເຈົ້າອົງຫວຽດ ) ເຊິ່ງທັງສອງພະອົງນີ້ ເປັນຫຼານຂອງເຈົ້າສຸຣິຍະວົງສາທັມມິກກະຣາດ ທີ່ສືບຂັດຕິຍະວົງມາແຕ່ສະໄໝຊຸນລໍ ແລະແຕ່ສະໄໝພະເຈົ້າຟ້າງຸ່ມເປັນຕົ້ນມາ. ພະອົງຖືກສະຖາປະນາໃຫ້ເປັນເຈົ້າຄອງນະຄອນນີ້ໂດຍ ພຣະຄຣູ ໂພນສະເມັກ ໃນ ຄ.ສ ໑໗໑໓ ແລະຄອງຣາດມາຮອດ ໑໗໓໗ ຊົງພະນາມວ່າ **ເຈົ້າ ສ້ອຍສີສະໝຸດ ພຸດທາງກູນ** ແຕ່ຄົນທັງຫຼາຍມັກເອີ້ນວ່າ ***ເຈົ້າ ສ້ອຍສີສະໝຸດ.***

ພະຣາຊະດຳຣັດຂອງເຈົ້າ ສ້ອຍສີສະໝຸດສະບັບທຳອິດ ໄດ້ແຕ່ງຕັ້ງ ພຣະຄຣູ ໂພນສະເມັກຜູ້ເປັນພໍ່ລ້ຽງ ເປັນເຈົ້າ ຣາຊະຄຣູຫຼວງ ແລະໄດ້ສ້າງວັດໃຫ້ ພຣະຄຣູ ( ວັດຫຼວງໃໝ່ ) ພ້ອມທັງນິມົນ ສານຸສິດຂອງພຣະຄຣູ ມາພຳນັກຢູ່ດ້ວຍ. ແລ້ວພະອົງກໍເຊີນ ນາງແພງ ມາປະຈຳຢູ່ວັງຫຼວງ ແລະໄດ້ປຸກໂຮງໃຫ້ທີ່ບ້ານ ສີສຸມັງ. ພະອົງ ຂັນອາສາລ້ຽງເກືອ ແລະໃຫ້ບັນດາເຈົ້າຂຸນມຸນນາຍນັບຖືນາງ ໃນນາມຜູ້ສືບທາຍາດຂອງເຈົ້ານາຍ ຈຳປາສັກ ມາແຕ່ສະໄໝກ່ອນ.

ເມື່ອພະເຈົ້າ ສ້ອຍສີສະໝຸດ ລານພຸດທາງກູນ ສິ້ນພະຊົນ ເຈົ້າໄຊຍະກຸມມານໄດ້ຂຶ້ນຄອງຣາດແທນ ໃນປີຕໍ່ມາ ( ຄ . ສ ໑໗໓໘ - ໑໗໙໑ ) ໂດຍແຕ່ງຕັ້ງເຈົ້າ ທັມມະເທໂວ ພະອະນຸຊາເປັນ ອຸປະຣາດ.

ໃນ ຄ.ສ ໑໗໗໘ ກອງທັບສະຫຍາມຍົກຂຶ້ນມາຍຶດເອົານະຄອນຈຳປາສັກ ຈາກເຈົ້າໄຊຍະກຸມານແລ້ວຍົກຂຶ້ນມາຕີນະຄອນຫຼວງວຽງຈັນໄດ້ສຳເລັດ ***ໃນປີຕໍ່ມາ ອານາຈັກຈຳປາສັກເລີຍເສັຽເອກະລາດຕົກເປັນເມືອງສ່ວຍຂອງສະຫຍາມນັບແຕ່ເວລານັ້ນເລີຍ ຄືອານາຈັກ ຈຳປາສັກຮັກສາຄວາມເປັນ ເອກະລາດຕົນໄວ້ໄດ້ພຽງ ໖໔ ປີເທົ່ານັ້ນ.***

ໃນປີ ໑໗໙໑ ມີ ທ້າວ ຊຽງແກ້ວ ບ້ານເຂົາໂອງ ເປັນຂະບົດ ໄດ້ຍົກກຳລັງມາຕີເມືອງຈຳປາສັກ ເຈົ້າໄຊຍະກຸມມານ ເຊິ່ງໃນເວລານັ້ນ ພະຊົນມາຍຸໄດ້ ๗໑ ພັນສາແລ້ວ ຊົງສະຫຼົດພະໄທເປັນຢ່າງຍິ່ງ ຈຶ່ງເອົາຕົວຫຼົບເຂົ້າປ່າໜີ ຊຽງແກ້ວຈຶ່ງຍຶດເມືອງໄດ້. ຂະນະດຽວກັນນັ້ນ ທ້າວຝ່າຍໜ້າ ແລະ ພະປະທຸມສຸຣະຣາດ ເຈົ້າເມືອງໆ ອຸບົນ ຍົກກຳລັງມາຍາດເອົາເມືອງ ຈຳປາສັກຈາກ ອ້າຍຊຽງແກ້ວໄດ້ ຈຶ່ງປະຫານຊີວິດທ້າວ ຊຽງແກ້ວເສັຽ ໃນປີນັ້ນເອງ. ເມື່ອເຫັນວ່າທ້າວ ຝ່າຍໜ້າ[6] ມີຄວາມຊອບດັ່ງນັ້ນ ພະເຈົ້າແຜ່ນດິນ ເມືອງສະຫຍາມ ຈຶ່ງໄດ້ ແຕ່ງຕັ້ງໃຫ້ ທ້າວ ຝ່າຍໜ້າ ເປັນກະສັດ ຄອງອານາຈັກ ຈຳປາສັກ ແທນເຈົ້າໄຊຍະກຸມມານ ( ໑໗໙໑ - ໑໘໐໗ ) ຊົງພະນາມວ່າ **ພະວິໄຊຂັດຕິຍະວົງສາ.**

[6] ທ້າວ ຝ່າຍໜ້າ ເປັນບຸດຂອງ ພະວໍ ເຊິ່ງແຕກຄໍກັນກັບເຈົ້າ ສິຣິບຸນຍະສານ ອານາຈັກ ລ້ານຊ້າງວຽງຈັນ ມາຕັ້ງຕົນແຂງເມືອງຕ້ານກັບວຽງຈັນ ທີ່ເມືອງໜອງບົວລຳພູ.

***<u>ສະໄໝຂອງພະຍາ ວິໄຊຂັດຕິຍະວົງສານີ້ເອງ ທີ່ພະອົງໄດ້ສົ່ງ ພະແກ້ວນໍ້າຍາດ ອົງຄູ່ບ້ານຄູ່ເມືອງໃຫ້ສະຫຍາມ ເພື່ອເປັນການຕອບແທນທີ່ສະຫຍາມໄດ້ປູນບໍາເນັດໃຫ້ ເຖິງຂັ້ນໄດ້ເປັນເຈົ້າແຜ່ນດິນ ອານາຈໍາປາສັກ ເວລານັ້ນ.</u>***

ເມື່ອ ພະວິໄຊ ຂັດຕິຍະວົງສາ ເຖິງແກ່ກັມ ທາງຝ່າຍສະຫຍາມ ຈຶ່ງແຕ່ງຕັ້ງ ເຈົ້າ ໜານ້ອຍ ຂຶ້ນຄອງຣາດ ອານາຈັກ ຈໍາປາສັກແທນ ( ໑໗໑໖ - ໑໗໑໗ ). ຕົກມາ ໃນ ຄ.ສ ໑໗໑໗ ເກີດຂະບົດ ນາຍສາ ກຽດໂງ້ງ ທີ່ກຽດຊັງການກົດຂີ່ຂົ່ມເຫັງຄົນລາວ. ເຈົ້າໜານ້ອຍ ຖືກນາຍສາ ຍຶດເອົາເມືອງໄດ້ ແລ້ວເອົາໄຟຈູດເມືອງເສັຽ ເຈົ້າໜານ້ອຍຖືກເຈົ້ານາຍຝ່າຍໄທ ຈັບລົງໄປຊໍາລະໂທດທີ່ກຸງເທບ ຈົນເຖິງແກ່ກັມນະທີ່ນັ້ນ ໃນ ຄ.ສ ໑໗໘໗.

ເສິກອ້າຍສາ ກຽດໂງງນີ້ ເຈົ້າຣາຊບຸດໂຍ້ ຫຼືເຈົ້າ ໂຍ ເຊິ່ງເປັນຣາຊະບຸດຂອງເຈົ້າ ອະນຸ ອານາຈັກລ້ານຊ້າງວຽງຈັນ ໄດ້ນໍາເອົາກໍາລັງລົງມາປາບ ອ້ານສາ ກຽດໂງ້ງໄດ້. ເມື່ອ ເຫັນຄວາມຊອບດັ່ງນັ້ນ ຊາວເມືອງຈໍາປາສັກ ຈຶ່ງອັງເຊີນພະອົງຂຶ້ນເປັນເຈົ້າແຜ່ນດິນຈໍາປາສັກເລີຍ ( ໑໗໑໙ - ໑໗໘໖໗ ).
ເຈົ້າຣາຊະບຸດໂຍ້ ເປັນແຂນແຮງອີກທາງໜຶ່ງຢູ່ລາວພາກໃຕ້ໃນການຢຶດເອົາເມືອງ ສັງຂະ ເມືອງ ສຸຣິນ ເມືອງ ຂຸຂັນ ເວລາທີ່ເຈົ້າອະນຸວົງ ອົງຣາຊະບິດາ ທໍາການກູ້ ອິດສະຫຼະພາບຈາກສະຫຍາມ. ແຕ່ເມື່ອກອງທັບສະຫຍາມຍົກຂຶ້ນມາຕີວຽງຈັນ ພະອົງຖືກເຈົ້າຣູຍ ລູກເຈົ້າໂອ ຈັບສົ່ງໃຫ້ສະຫຍາມ ແລະພະອົງຈຶ່ງຖືກສະຫຍາມລົງໂທດຈົນສິ້ນພະຊົນມີ່ກຸງເທບ ໂດຍຫາວ່າພະອົງເປັນຂະບົດ ຕໍ່ສະຫຍາມຄືອົງພໍ່.
ເມື່ອສິ້ນ ຣາຊະການ ເຈົ້າ ຣາຊະບຸດໂຍ້ ເຈົ້າຣຸຍໄດ້ຂຶ້ນຄອງບັນລັງຈໍາປາສັກແທນ ( ໑໗໘໗ - ໑໗໔໑ ). ເຖິງ ຄ.ສ ໑໗໖໗ ເກີດໄຟໃໝ້ເມືອງຈໍາປາສັກອີກ ເຈົ້າຣຸຍຈຶ່ງຍ້າຍເມືອງມາຕັ້ງໃໝ່ ທີ່ບ້ານຫີນລອດ ແລະຄອງເມືອງມາໄດ້ ໑໖ ປີ ກໍສະເດັດສູ່ ທິວົງຄົດ.

ເມື່ອສິ້ນຣາຊະການເຈົ້າຣູຍແລ້ວ ເຈົ້ານາກ ຈຶ່ງຂຶ້ນຮັບຣາຊະການແທນ ( ໑໘໔໑ - ໑໘໕໑ ). ພະອົງທ່ານ ປົກຄອງເມືອງມາເປັນເວລາ ໑໐ ກວ່າປີ ຈະດ້ວຍໂທດສະຖານໃດ ທາງເຈົ້ານາຍສະຫຍາມຈຶ່ງຮຽກຕົວລົງ ກຸງເທບ ຖືກທາງສະຫຍາມວາງແຜນຂ້າເສັຽ ໃນພະຊົນມາຍຸ ໗໘ ພັນສາ.

ເວລານັ້ນ ອານາຈັກຈໍາປາສັກ ຈຶ່ງບໍ່ມີເຈົ້າຄອງເມືອງເຖິງ ໔ ປີ ທາງກຸງເທບຈຶ່ງແຕ່ງເຈົ້າ ຍຸຕິທັມມະທອນ ( ຄໍາໃຫ່ຽ ) ຂຶ້ນຄອງຣາດ ( ໑໗໕໕ - ໑໗໕໙ ). ພະອົງຄອງເມືອງມາໄດ ໕ ປີ ກໍເຖິງແກ່ພິລາໄລ. ໃນຣາຊະການຂອງພະອົງ ບໍເຫັນປະກົດມີເຫດການໃດສໍາຄັນແກ່ບ້ານເມືອງເລີຍ.
ເມື່ອເຈົ້າ ຄໍາໃຫ່ຽ ສຸຣະຄົດໄປແລ້ວ ປະຊາຣະສະດອນ ເຈົ້າເຫັນດີ ອັງເຊີນ ເຈົ້າຄໍາສຸກ ບຸດເຈົ້າຣຸຍຂຶ້ນຄອງຣາດ ( ໑໗໘໔ - ໑໙໐໑ ) ຊົງພະນາມວ່າ ເຈົ້າ ຍຸດຕິທັມມະທອນ ( ຄໍາສຸກ ). ພະອົງໄດ້ຍ້າຍເມືອງ ຈາກ ບ້ານຫີນລອດ ມາຕັ້ງຢູ່ຣິມຝັ່ງຂອງ ຕາເວັນຕົກ ເຊິ່ງກາຍມາເປັນເມືອງ **<u>ຈໍາປາສັກ</u>**

________. ພະອົງເປັນຜູ້ໜຶ່ງທີ່ຈົງຮັກພັກດີ ຕໍ່ເຈົ້ານາຍທາງກຸງເທບທີ່ສຸດ ຈົນໄດ້ຮັບນາມມະຍົດ ແລະ ປູນບຳເນັດຫຼາຍຢ່າງ ເຖິງຂັ້ນ ມອບຣາຊະບຸດ ຣາຊະທິດາທັງໝົດລົງໄປ ອົບຣົມບົ່ມສອນຢູ່ທີ່ກຸງເທບ ຈົນໝົດ.

ຕົກມາເຖິງ ຄ . ສ ໑໙໐໓ ອານາຈັກ ນະຄອນຈຳປາສັກທາງຝັ່ງຂວາແມ່ນ້ຳຂອງ ຕົກເປັນເມືອງຂຶ້ນຂອງຝຣັ່ງ ເມື່ອພະອົງສັ່ງງພະຊົນແລ້ວ ທາງການຝ່າຍຝຣັ່ງ ຈຶ່ງແຕ່ງ ເຈົ້າ ຣາຊະດາໄນ ເປັນຜູ້ວ່າການອານາຈັກຈຳປາສັກ ເລີຍບໍ່ໄດ້ຮັບຍົດເປັນກະສັດເລີຍ ຕາມທີ່ຣັດຖະບານສະຫຍາມເຄີຍແຕ່ງຕັ້ງມາ ຍ້ອນວ່າ ທາງ ຝ່າຍຝຣັ່ງໄດ້ໂຮມເອົາ ດິນແດນທາງຟາກໃຕ້ຂອງລາວ ແຕ່ວຽງຈັນເຖິງຄອນພະເພງ ເຂົ້າເປັນເມືອງຂຶ້ນຂອງຝຣັ່ງໂດຍສົມບູນ

ຖ້າວ່ານະຄອນຈຳປາສັກຫາກຖືກແບ່ງ ແລະຕັດຮອນຍັງເຫຼືອເປັນແຜ່ນດິນນ້ອຍໆຈົນຮອດ ສະໄໝທ່ານ ດູດາຣ໌ ເດີ ລາເກຣ ມາເຫັນນັ້ນ ອານາຈັກຈຳປາສັກສູນເສັຽຈົນບໍ່ມີຄວາມໝາຍອັນໃດເລີຍ ເມື່ອປຽບທຽບໃສ່ບັນດາຣາຊະວົງອື່ນໆຂອງໂລກ. ຣາຊະທານີຊີຍັງເຫຼືອແຕ່ຕູບຕອງກາ ປຸກຢາຍຕາມລຳແມ່ນ້ຳເຫຼືອໄວ້ເປັນສັນຍາລັກຂອງ ຜາສາດຣາຊະມຸນທຽນ ແລະບັນດາເຊື້ອພະວົງຊີຍັງເຫຼືອແຕ່ ກະຕ່າຄຳຂັນໂທຄຳ ແລະງ້າງຄຳຝາກໄວ້ເປັນຣາຊະສັນຍາລັກກໍຕາມ ແຕ່ເຈົ້າຈຳປາສັກ ກໍຍັງເປັນເຈົ້າຈຳປາສັກຄືເກົ່າ ເຊິ່ງເອີ້ນກັນວ່າ: **" ເຈົ້ານະຄອນຈຳປາສັກ ຜູ້ຄອງຣາຊະສົມບັດ ".**

ເວລານັ້ນ ພວກໄທພະຍາຍາມສຸດຂີດເພື່ອຕັດຮອນປະເທດລາວລົງເທົ່າທີ່ຈະເຮັດໄດ້ ແລະຮັກສາໄວ້ເປັນພຽງເຂດແຂວງນ້ອຍໆ ໃນນາມອະດີດ ອານາຈັກເກົ່າເທົ່ານັ້ນ. ແມ່ນອຳນາດທາງບາງກອກເອງເປັນຜູ້ແຕ່ງຕັ້ງເຊື້ອເຈົ້າ ຈຳປາສັກມາແຕ່ກ່ອນ ເປັນຜູ້ປົກຄອງ ຄືດັ່ງດຽວກັນກັບສະໄໝອານາຈັກ ຈຳປາສັກມີເອກະຣາດໃນເມື່ອກ່ອນ. ຫຼັງຈາກປົດເຈົ້າຣາຊະບຸດໂຍ້ອອກຈາກຣາຊະບັນລັງໃນ ຄ.ສ ໑໘໔໙ ຍ້ອນພະອົງບໍ່ແມ່ນເຊື້ອເຈົ້າຈຳປາສັກ ທາງບາງກອກຈຶ່ງເອົາເຈົ້າຮູຍທີ່ເປັນເຊື້ອເຈົາທາງຈຳປາສັກແທ້ມາເປັນເຈົ້າຄອງນະຄອນ ຈຳປາສັກແທນ ແຕ່ແນວໃດກໍຊ່າງ ຣາຊະວົງຈຳປາສັກ ແມ່ນຣາຊະວົງນ້ອງຫຼ້າສາຂາໜຶ່ງ ທີ່ສືບເຊື້ອສາຍມາຈາກເຈົ້າຟ້າງຸ່ມຄືກັນ.

ເຈົ້າຄອງນະຄອນຈຳປາສັກ ມີຖານັນດອນເປັນກະສັດໄດ້ ກໍແຕ່ເມື່ອຢູ່ໃນສະໄໝກ່ອນແຄວັນດັ່ງກ່າວຕົກເປັນເມືອງຂຶ້ນຂອງສະຫຍາມ ເຊິ່ງ ຟຣັງຊິສ ກາກນິເອ ( FRANCIS GARNIER ) ກ່າວໄວ້ໃນ7າວມາພົບ ອານາຈັກຈຳປາສັກວ່າ: *ເຖິງຊິຢູ່ໃນອຳນາດການຄອບຄອງຂອງ ບາງກອກທີ່ເຈົ້າຈຳປາສັກໄດ້ຮັບຣາຊະສັນຍາລັກເປັນ ດາບຄຳ ອັນເປັນເຄື່ອງໝາຍທີ່ຖືກຕ້ອງຕາມກົດໝາຍ ແລະໄດ້ຮັບ ໄຟພະເລີກເພື່ອທຳພິທີຖະຫວາຍພະເພີງສົບ ເວລາສະຫວັນນະຄົດ ຈາກເຈົ້າແຜ່ນດິນສະຫຍາມກໍຕາມ ແຕ່ກະສັດຈຳປາສັກຍັງຂຶ້ນສະເຫວີຍຣາດຢູ່ ເມືອງຈຳປາສັກ ດັ່ງດຽວກັບເຈົ້າ ພີ່ເຈົ້ານ້ອງ ຢູ່ເມືອງ ອຸບົນ ເຊິ່ງ ທ່ານດູດາຣ໌ ເດີ ລາເກຣໄດ້ເຂົ້າຮ່ວມ ຣາຊາພິເສກໃນ ຄ.ສ ໑໘໖໗.* ທ່ານ ດູດາຣ໌ ເດີ ລາເກຣ ຍັງກ່າວໄວ້ວ່າ: *ຜູ້ສຳເລັດ ຣາຊະການເມືອງ ອຸບົນ ເຖິງວ່າຊິຖືກແຕ່ງຕັ້ງຈາກ ບາງກອກມາປົກຄອງກໍຕາມ ແຕ່ເຈົ້ານາຍ*

*ຝູງນັ້ນກໍໄດ້ຮັບ ຖານັນດອນເທົ່າໆກັບກະສັດ ເຊິ່ງເຈົ້າຄອງນະຄອນທ່ານນັ້ນໄດ້ສືບກະກຸນມາຈາກ ຣາຊະວົງວຽງຈັນຄືກັນ.*

ທ່ານ ລຸຍ ເດີ ກາກເນ ມີຄວາມເຫັນຕື່ມອີກວ່າ: *" ເຈົ້າຄອງນະຄອນຈຳປາສັກ ຍັງຮັກສາຖານັນດອນເປັນກະສັດຢູ່ "  ພະອົງມີເຄື່ອງມືການປົກຄອງຄືກັນກັບກະສັດອົງອື່ນໆໃນໂລກຄື ມີຣາຊບໍຣິພານເປັນບໍຣິວານ ອ້ອມຂ້າງບັນລັງດ້ວຍຄວາມສະດວກສະບາຍທຸກຢ່າງ.* ມີເຊື້ອພະວົງຂອງ ຈຳປາສັກ ພະອົງໜຶ່ງຈົ່ມທຸກນຳທ່ານ ດູດາຣ໌ ເດີ ລາເກຣວ່າ: *" ພະອົງທ່ານບໍ່ໄດ້ຖານັນດອນເປັນເຈົ້າເປັນຈອມອັນໃດເລີຍໃນນາມເປັນເຈົ້າຜູ້ໜຶ່ງ ".*

ເຈົ້າເມືອງ ອຸບົນ ເປັນຜູ້ວ່ອງໄວ ເກ່ງໃນການຖະແຫຼງແປງວາດ ຊອກທຸກວິທີທາງທີ່ຈະເອົາເຊື້ອສາຍຂອງຕົນມາເປັນເຈົ້າຈຳປາສັກ.   ເຊື້ອສາຍຜູ້ນັ້ນ ອາດຊິແມ່ນລູງ ທີ່ໄທໄດ້ແຕ່ງຕັ້ງໃຫ້ປົກຄອງຢູ່ເມືອງ ຄຳທອງນັ້ນເອງ ທັງນີ້ກໍຈະບໍ່ສ້າງຄວາມຫວາດລະແວງເຖິງຂັ້ນຄໍຂາດບາດຕາຍອັນໃດເລີຍ ຈາກເຈົ້າ ຊີວິດສະຫຍາມ.  ເຈົ້າ ຊີວິດຈຳປາສັກ ກໍຄືເຈົ້າຊີວິດອົງອື່ນໆທີ່ມີຢູ່ໃນໂລກ.  ຊິຢູ່ໃນນາມເຈົ້າຄອງນະຄອນກໍຕາມ ເຈົ້າຈຳປາສັກກໍມີມົນຕີໃຫຍ່ສາມຄົນຄື: ພະຍາເມືອງແສນ ພະຍາເມືອງຈັນ ແລະພະຍາເມືອງກາງ.  ແຕ່ລະພະຍາ ກໍມີຜູ້ຢູ່ໃຕ້ອຳນາດຂອງຕົນລົງມາອີກ ເຈັດ ຄົນ ເພື່ອບັນຊາວຽກ ຣາຊະການຍິກຍ່ອຍ ແລະບັນດາຂຸນນາງທັງເຈັດດັ່ງກ່າວ ຍັງມີຂຸນນາງເລັກໆນ້ອຍໆລົງມາອີກຫຼາຍຄົນ ທີ່ຢູ່ໃຕ້ບັງຄັບບັນຊາຕາມລຳດັບ.  ໃນນາມກະສັດແລ້ວ ພະອົງຍັງມີທີ່ເປີກສາພິເສດອີກເຊັ່ນ: ມີນາຍທະຫານ ມີຂຸນແວດລະວັງ ສັບພະທົນ ມີຂຸນ ໂຮງຊາວ ມີຂຸນຊ່າງ ມີເພັດຊະຄາດ ມີກອງຣາຊະເລຂາ ດັ່ງນີ້ເປັນຕົ້ນ...

ໃນ ຄ.ສ ໑໘໙໙ ເມືອງຈຳປາສັກມີວັດຢູ່ ໗໙ ແຫ່ງ  ເຊິ່ງເຕັມແຕ່ພະພຸດທະຮູບທັງນັ້ນ.  ວັດທີ່ສຳຄັນກວ່າເພິ່ນໄດ້ແກ່ວັດທາດ ເຊິ່ງເປັນວັດຂອງ ຣາຊະວັງ ຕັ້ງຢູ່ຕອນໃຕ້ສຸດຂອງເມືອງ .  ຈາກນັ້ນ ເຈົ້າຄຳສຸກ ຈຶ່ງສ້າງວັດທົ່ງຂຶ້ນ ລະຫວ່າງເຄິ່ງທາງມາ ບ້ານພະພິນ ທີ່ເປັນທີ່ຕັ້ງຂອງ ຫໍມະເຫສັກ " ເຈົ້າພະພິນ " ແລະອີກວັດໜຶ່ງ ໄດ້ແກ່ ວັດທາດຝຸ່ນ ເຊິ່ງເປັນວັດ ບັນຈຸ ຝຸ່ນກອງພອນ ພະຄູຂີ້ຫອມ ( ພະຄູໂພນສະເມັກ ).  ຕໍ່ໜ້າວັດທົ່ງ ເຊິ່ງເປັນວັດ ຣາຊະວັງນັ້ນ ພະເຈົ້າ ຊີວິດໄດ້ປຸກຫໍໄຊ ເພື່ອເປັນບ່ອນ ທຳພິທີ ສະຫຼອງໄຊຕ່າງໆ ພິເສດກໍແມ່ນເປັນບ່ອນຄອຍຊົມເຮືອຊ່ວງ ເວລາບຸນຊ່ວງເຮືອ ອອກພັນສາ ປະວໍຣະນາຂອງເດືອນພະຈິກໃນທຸກໆປີ.  ເທດສະການບຸນຊ່ວງເຮືອນີ້ ພະເຈົ້າຊີວິດໄດ້ເຊີນເອົາພວກຂ້າ ມາຮ່ວມທຸກໆປີ  ເຊິ່ງມີປະເພນີຖືກັນວ່າ  ເຂົາເຈົ້າເປັນອ້າຍກົກໃນນາມເຈົ້າຖິ່ນເຈົ້າຖານ ແລະເປັນຜູ້ພິທັກ ທໍຣະນີ.

ສຳຄັນກວ່າໝູ່ແມ່ນ  ໃນຣາຊະການເຈົ້າຄຳສຸກເຊິ່ງອີງຕາມການບັນທຶກ ຂອງທ່ານ  ການລີເອນີ  ( Gallieni ) ໄດ້ກ່າວໄວ້ວ່າ: *" ເຈົ້ານະຄອນຈຳປາສັກ ເປັນຜູ້ທີ່ວາງພະໄທຂອງເຈົ້າ ຊີວິດສະຫຍາມກວ່າໝູ່ໝົດໃນບັນດາປະເທດສະຣາດທັງຫຼາຍ   ດັ່ງນັ້ນ ເຈົ້າຄອງນະຄອນຈຳປາສັກຈຶ່ງເປັນທີ່ໄວ້ເນື້ອເຊື່ອໃຈຮອງຈາກມະຫາ ອຸປະຮາດບາງກອກ ".*

ເພື່ອຕ້ານກັບອຳນາດການປົກຄອງສະຫຍາມ ທີ່ຄວບຄຸມຈຳປາສັກຢູ່ນັ້ນ  ເຈົ້າຄຳສຸກໄດ້ຕັ້ງເມືອງຂອງຕົນຂຶ້ນແຕ່ລະເມືອງຕາມຣາຊະປະເພນີດັ້ງເດີມດັ່ງເຈົ້າສ້ອຍສີສະໝຸດເຄີຍຕັ້ງຂຶ້ນຄືແຕ່ກ່ອນ. ອາໄສ

ການປະຊາສຳພັນອັນຄ່ອງຕົວດັ່ງນີ້ ບັນດາເມືອງອ້ອມຂ້າງ ຕ້ອງຂຶ້ນກັບເມືອງແມ່ ທີ່ມີເຈົ້າປົກຄອງສືບໆ ກັນມາແຕ່ດັ້ງເດີມນັ້ນ ເຈົ້າຄຳສຸກຈຶ່ງສາມາດຕັ້ງເມືອງໃໝ່ຂຶ້ນໄດ້ ໑໐ ເມືອງ ແລະບາງເມືອງແມ່ນຕັ້ງຢູ່ ໃນເຂດຄອບຄອງຂອງ ບາງກອກໂດຍກົງ ທັງນີ້ກໍເພື່ອເປັນການຂະຫຍາຍອຳນາດຂອງຕົນອອກຕື່ມ ( Archaimbault P. 574 ) ດັ່ງເມືອງ ສຸວັນນະຄີຣີ ເມືອງ ວາປີພາບຸນ ເມືອງ ມະຫຸ ຣາຊະພົນ ( ໃຕ່ສະ ພາດ ) ເມືອງ ສຸທາວະຣີ ( ໃນເຂດແຂວງ ສາຣະວັນ ) ເມືອງ ນະຄອນເພງ ( ຕາເວັນອອກສ່ຽງເໜືອ ເມືອງ ອຸບົນ ) ເມືອງ ວາຣິນຄຳຣາບ ( ຕໍ່ໜ້າເມືອງ ອຸບົນ ຢູ່ຝັ່ງກົງກັນຂ້າມ ເຊມູນ ) ເມືອງ ດອນປະ ດິດ ( ບ້ານ ຈາລະນາດອນ ເຂດນ້ຳປ່າສັກ ) ເມືອງ ອຸທຸມ ( ບ້ານທ່າຂ້າ ຕັ້ງເປັນເມືອງໃນປີ ຄ.ສ 1872 ) ເມືອງ ສະພັງພູຜາ ( ບ້ານຫ້ວຍຫີນ ຢູ່ຕາເວັນອອກສ່ຽງເໜືອ ເມືອງໂຂງ ) ແລະເມືອງ ສຸດນະ ຄອນ ( ຢູ່ເຂດ ເຊສານ ໃນແຂວງ ຣັດຕະນະຄີຣີ ປະເທດຂະເໝນ ປັດຈຸບັນ ). ເຖິງວ່າ ເຈົ້າຄຳສຸກ ຊິ ໄດ້ຄວາມໂປດປານ ພະ ຣາມາທິບໍດີ ທີ ໕ ( ຈຸລາລົງກອນ ) ແລະມີການໄວ້ວາງພະໄທຕະຫຼອດມາກໍດີ ເຈົ້າຄຳສຸກກໍໃຊ້ ເລ່ຫຼ່ຽມກັບໄທຢ່າງລະມັດລະວັງ ແລະຢ້ານທາງບາງກອກ ທຳລາຍແຜນຂອງພະອົງຕະ ຫຼອດມາສະເໝີ. ພະອົງເປັນຜູ້ສືບ ຣາຊະທາຍາດຂອງຈຳປາສັກຜູ້ປາດເປື່ອງ ດຳເນີນນະໂຍບາຍທາງ ການເມືອງພາຍໃນ ແກ່ເຈົ້ານາຍໃຫ້ຊາບຊຶມໃນຄວາມເປັນຊາດ ແລະຈົງຮັກພັກດີແກ່ພະອົງ.

ຕາມທ່ານ ເອຈຽນ ໄອໂມນີເອ ( Etienne AIMONIER )ໄດ້ຂຽນໄວ້ວ່າ: *" ບໍ່ມີອັນໃດເລີຍແກ່ຄົນລາວທຸກ ຄົນ ທີ່ທ່ານພົບເຫັນ ຂະນະທີ່ທ່ານຜູ້ນີ້ ເດີນໄປທົ່ວປະເທດລາວວ່າ ເຈົ້າຄຳສຸກຊິພົບຄວາມສຳເລັດຂອງ ຕົນ ຍ້ອນໂຊກຊາຕານຳພາພະອົງເສັຽແຜ່ນດິນທີ່ຕົນທ້ອນໂຮມທັງໝົດ. ຕົກມາໃນປີ ຄ.ສ ໑໙໐໐ ເຈົ້າ ຄຳສຸກ ຫຼື ຍຸດຕິທັມມະທອນໄດ້ສິ້ນພະຊົນ ໂດຍບໍ່ໄດ້ຮັບໝາກຜົນຫຍັງຕາມຄວາມໃຝ່ຝັນຂອງພະອົງ ເພື່ອປັບປຸງແຜ່ນດິນຂອງຕົນ ".*

ຂະນະທີ່ພວກລ່າ ອານານິຄົມຝຣັ່ງໄດ້ຕັ້ງບ່ອນປະຈຳການອຳນາດການປົກຄອງຂອງຕົນຂຶ້ນ 3 ແຫ່ງທີ່ ພາກໃຕ້ຄືເມືອງ ຊຽງແຕງໃນ ຄ.ສ ໑໘໙໑ ເມືອງອຸເທນ ແລະບ້ານມ່ວງ ໃນ ຄ.ສ ໑໘໙໓ ນັ້ນ ທາງຝຣັ່ງ ຍັງໄດ້ຕັ້ງສະຖານທູດຂອງຕົນອີກຢູ່ ບາງກອກ ( Auguste Pavie - consul ) ທາງບາງກອກກໍໄດ້ຍື່ນມື ເຂົ້າມາແຊກແຊງທາງ ອານາຈັກຈຳປາສັກເຂົ້າອີກ ແລະໄດ້ແຕ່ງຂ້າຫຼວງໄທມາບີບເຈົ້າຄຳສຸກ ເພື່ອປົກ ຄອງແທນເຈົ້າຄຳສຸກໂດຍກົງ ທີ່ເປັນຊົງຊະຣາພາບແລ້ວ.

ໃນ ຄ.ສ ໑໘໙໓ ໄທໄດ້ປະດິນແດນຝັ່ງຊ້າຍແມ່ນ້ຳຂອງແກ່ຝຣັ່ງທັງໝົດແລ້ວນັ້ນ ຊິເປັນເຫດແນວ ໃດກໍບໍ່ແຈ້ງ ຈຶ່ງໃຫ້ໂອກາດແກ່ລາວຝັ່ງຂວາມີຄວາມດີໃຈສຸດຂີດໃນຄວາມເປັນລາວຂຶ້ນ. ເຈົ້າຄຳສຸກໄດ້ ເສັຽເມືອງທາງຝັ່ງຊ້າຍແມ່ນ້ຳຂອງທັງໝົດ 8 ເມືອງແກ່ຝຣັ່ງເຊິ່ງເປັນເມືອງທີ່ພະອົງໄວ້ເນື້ອເຊື່ອໃຈແທ້ໆ ພ້ອມກັນນັ້ນກໍຍັງເສັຽເຂດເສດຖະກິດທີ່ສຳຄັນຂອງພະອົງອີກ ຄືເຂດດິນດຳນ້ຳຊຸ່ມທາງຝັ່ງຊ້າຍແມ່ນ້ຳ ຂອງບາງເຂດເຊັ່ນ: ບ້ານ ທ່າໂພ ແລະເຂດພູພຽງບໍລິເວນ ເຊິ່ງເປັນເຂດໂປດປານຂອງພະຣາຊະວັງ ແທ້ໆ.

ເພື່ອດຳເນີນນະໂຍບາຍທ້ອນໂຮມແຜ່ນດິນລາວເປັນອັນໜຶ່ງອັນດຽວໃນເຄືອ ອານານິຄົມ ຂອງຝຣັ່ງ ທ່ານ ປາວີ ອາໄສ ອຳນາດທາງຈຳປາສັກ. ໃນສົນທິສັນຍາຝຣັ່ງ - ສະຫຍາມ ໗ ຕຸລາ ໑໙໐໔ ແລະຕາມສົນທິສັນຍາ ວັນທີ ໓ ຕຸລາ ໑໘໙໓ ເຂດແດນຝັ່ງຂວາເມືອງຈຳປາສັກທັງໝົດຕ້ອງເປັນຂອງ

ລາວ. ແຕ່ຣາຊະອານາຈັກຈຳປາສັກມີຫຼາຍຫົວເມືອງທາງຝັ່ງຊ້າຍ ທີ່ມີເຂດແດນກວມເອົາທາງໃຕ້ຮອດເມືອງ ທາຣາບໍຣິວັດ ( ເມືອງເກົ່າ ເຊລຳເພົາ ທາງທິດຕາເວັນຕົກສ່ຽງເໜືອເມືອງໂຂງ ຕັ້ງຂຶ້ນໃນປີ 1844 ) ແລະເມືອງ ຊຽງແຕງ ( ເປັນເມືອງຂອງລາວແຕ່ສະໄໝ ສະຕະວັດທີ ໑໙ ) ໄດ້ຕັດໃຫ້ຂະເໝນທັງໝົດເພື່ອງ່າຍໃນການປົກຄອງ. ໃນສົນທິສັນຍາ ຝຣັ່ງ - ສະຫຍາມ ໃນວັນທີ ໔໓ ເມສາ ໑໙໐໗ ມີການແບ່ງເຂດແດນລະຫວ່າງ ລາວ - ສະຫຍາມ ເມືອງ ອຸບົນທີ່ເປັນເມືອງລາວມາແຕ່ ໑໗໙໔ ໄດ້ຕັດອອກໃຫ້ສະຫຍາມ. ໃນສົນທິສັນຍາ ຝຣັ່ງ - ສະຫຍາມ ວັນທີ ໑໑ ເມສາ ໑໙໔໔ ປະເທດຝຣັ່ງໄດ້ປະເທດລາວທາງຝັ່ງຂວາແມ່ນ້ຳຂອງໃຫ້ແກ່ສະຫຍາມທີ່ເປັນພັນທະມິດກັບຍີ່ປຸ່ນຄື ຈຳປາສັກ ແລະໄຊຍະບູຣີ.

4

ເຈົ້າຄຳສຸກສະຫວັນນະຄົດລົງແລ້ວ ຣາຊະບັນລັງຈຶ່ງວ່າງລົງໄລຍະໜຶ່ງ ສ່ວນສະຫຍາມທີ່ຖືກຝຣັ່ງບີບທາງການເມືອງຢູ່ແລ້ວ ກໍເລີຍບໍ່ຟ້າວຈັດວຽກງານອັນໃດທາງຈຳປາສັກ ເພື່ອຜູ້ສືບຣາຊະບັນລັງ. ດັ່ງນັ້ນການປົກຄອງ ຈຶ່ງເປັນໜ້າທີ່ຂອງຜູ້ສຳເລັດ ຣາຊະການແທນພະອົງເປັນຜູ້ວ່າການພາງໄປສາກ່ອນ. ໜຶ່ງໃນ ຣາຊະບຸດຂອງເຈົ້າຄຳສຸກ ໄດ້ແກ່ເຈົ້າຫຼຽຍ ເຊິ່ງພະຣາຊະບິດາໄດ້ສົ່ງໄປບາງກອກ ພ້ອມດ້ວຍຍາດພີ່ນ້ອງອີກສອງພະອົງນັ້ນ ໄດ້ຖືກແຕ່ງຕັ້ງຈາກບາງກອກ ມາປົກຄອງຈຳປາສັກໃນພະນາມວ່າ " ເຈົ້າ ຣາຊະນາໄນ ".

ຂະນະທີ່ປະເທດຝຣັ່ງເອົາປະເທດລາວທັງໝົດທາງຝັ່ງຊ້າຍແມ່ນ້ຳຂອງເປັນຫົວເມືອງຂຶ້ນໃນຕົ້ນສະຕະວັດທີ ໔໐ ນັ້ນ ອຸປຣາດຈຳປາສັກໄດ້ໜີໄປລີ້ໄພຢູ່ບາງກອກ ແລະບັນດາລູກເຈົ້າຄຳສຸກທີ່ຈົງຮັກພັກດີຕໍ່ສະຫຍາມ ກໍພາກັນໜີຈາກຈຳປາສັກ ໄປບາງກອກຈົນໝົດ. ສ່ວນເຈົ້າຣາຊະດາໄນ ຜູ້ຮັກ ແລະຫວງແຫນແຜນດິນພໍ່ ພັດບໍ່ຍອມໜີເດັດຂາດ. ***" ອີງຕາມປະຫວັດສາດຜ່ານມາແລ້ວ ຝຣັ່ງໄດ້ຍົກໃຫ້ເຈົ້າຫຼຽຍ ຄອງແຄວັນຈຳປາສັກ ພຽງແຕ່ເປັນຜູ້ສຳເລັດ ຣາຊະການທັມມະດາ. ນາມມະຍົດຂອງພະອົງທີ່ໄທຕັ້ງໃຫ້ໃນນາມເຈົ້າ ຣາຊະດາໄນນັ້ນ ກໍຮັກສາໄວ້ຕາມເດີມ ".*** ແຕ່ ເວລານັ້ນ ປະເທດລາວຂອງຝຣັ່ງຈຶ່ງມີເຈົ້າຊີວິດພະອົງດຽວ ເຊິ່ງເປັນສັນຍາລັກຂອງຄົນລາວໂດຍທົ່ວໄປກໍຄື ເຈົ້າຊີວິດລາວທາງພາກເໜືອ ທີ່ເຄີຍສືບຂັດຕິຍາວົງມາຈາກ ອານາຈັກລ້ານຊ້າງເກົ່າ ແລະຜູ້ສຳເລັດ ຣາຊະການແຜ່ນດິນຕາງພະເນດພະກັນອີກຜູ້ໜຶ່ງ ເຊິ່ງຄຸ້ນເຄີຍໃນສາຍຕາຂອງຄົນລາວອີກນັ້ນກໍຄື ຜູ້ສືບຣາຊະທາຍາດທາງຣາຊະວົງຈຳປາສັກ. ດັ່ງນັ້ນ ເຈົ້າ ຣາຊະດາໄນ ຈຶ່ງມີອຳນາດປົກຄອງຢ່າງສົມບູນໃນເຂດ ເມືອງຈຳປາສັກ ເມືອງໂພນທອງ ແລະ ເມືອງມູນລະປະໂມກ ແລະຍັງມີອຳນາດປົກຄອງພູພຽງ ບໍລິເວນ ທາງຝັ່ງຊ້າຍແມ່ນ້ຳຂອງນຳອີກ.

ນເມື່ອມີການຮັບຮູ້ອານາຈັກຫຼວງພະບາງແຕ່ປີ ຄ.ສ ໑໙໔໕ ເປັນຕົ້ນມາດັ່ງນີ້ ປະເທດຝຣັ່ງກໍບໍ່ກ້າຕີລາຄາວ່າ ເຈົ້າຄອງນະຄອນຈຳປາສັກເປັນພຽງຂ້າຣາຊະການທັມມະດາ. ໃນນາມຊື່ສຽງເຈົ້າຣາຊະດາໄນນີ້ເອງຈຶ່ງສາມາດເວົ້າໄດ້ວ່າ ***: " ມີພຽງແຕ່ເຄື່ອງ ໝາຍປະດັບຍົດ ອັນງ່າຍໆວ່າເປັນເຊື້ອສາຍແຫ່ງຣາຊະວົງ ກໍຖືວ່າເປັນເຈົ້າໄດ້ແລ້ວ*** ( " Sisouk Na Champasack " Tempête sur le Laos P. 1 ).

ເມື່ອຕົກມາຮອດວັນທີ ໒໔ ຕຸລາ ໑໙໐໔ ເຈົ້າຣາຊະດານັ່ນໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ສຳເລັດຣາຊະການຈຳປາສັກ ດັ່ງນັ້ນລັດຖະບານຈຳປາສັກ ແມ່ນໜຶ່ງໃນຄະນະອຳນາດການປົກຄອງຂ້າຫຼວງຝຣັ່ງຢູ່ບ້ານມ່ວງເຊິ່ງນຳພາດ້ວຍຂ້າຣາຊະການປົກຄອງຊັ້ນ ໓ ຂອງຝຣັ່ງເທົ່ານັ້ນ.

ມາຮອດ ໑໙໐໗ ເມືອງປາກເຊເປັນສຳນັກກວ່າການແຂວງທີ່ແຍກອອກມາຈາກຈຳປາສັກ ທາງເຈົ້າຣາຊະດານັ່ນທີ່ເຄີຍພາເສນາມຸນຕີ ທຳພິທີພັດສັດຈະ ສອງເທື່ອຕໍ່ປີຢູ່ວັງຈຳປາສັກ ຍັງໄດ້ມາຮັບນ້ຳ ພິພັດສັດຈະ ຢູ່ທີ່ປາກເຊຕື່ມອີກ. ໃນທີ່ສຸດ ຄືຕົກມາຮອດວັນທີ ໓໑ ທັນວາ ໑໙໔໔ ທ່ານຜູ້ສຳເລັດຣາຊະການຈຳປາສັກກໍຖືກຜູ້ສຳເລັດຣາຊະການຂັ້ນສູງຂອງປະເທດຝຣັ່ງ ປະຈຳປະເທດລາວ ອອກດຳຣັດໃຫ້ກິນເບັ້ຍບຳນານ ຍ້ອນອາຍຸພື້ນກະສຽນທາງຣາຊະການ ດັ່ງດຽວກັນກັບຂ້າຣາຊະການທົ່ວໄປ.

ໃນການຮຸກຮານດ້ວຍກຳລັງຂອງຍີ່ປຸ່ນ ວັນທີ ໙ ມີນາ ໑໙໔໕ ຕໍ່ອຳນາດການປົກຄອງຂອງຝຣັ່ງນັ້ນ ແມ່ນເຈົ້າບຸນອູ້ມ ພ້ອມດ້ວຍກຳລັງກອງທັບປະສົມ ລາວ - ຝຣັ່ງ ຕ້ານກັບການຮຸກຮານຂອງຍີ່ປຸ່ນທີ່ເປັນພັນທະມິດ ກັບໄທ ແລະຕ້ານກັບຂະບວນລາວອິດສະຫຼະອີກຕໍ່ໜຶ່ງ ( ຫຼັງຈາກເສັຽໄຊຢູ່ ວຽງຈັນ ໑໙໔໖ ໄດ້ໂຕນໜີໄປປະເທດໄທ ). ເຈົ້າບຸນອູ້ມ ໃນນາມເຈົ້າຈຳປາສັກ ທີ່ສືບເຊື້ອສາຍມາຈາກພະບິດາ ທີ່ເຄີຍເປັນຜູ້ຈິງຮັກພັກດີຕໍ່ ບາງກອກ ຈຶ່ງໄດ້ຮັບເປັນຜູ້ສືບ ຣາຊະທາຍາດຂອງເຈົ້າ ຈຳປາສັກ .

ຫຼັງຈາກການປົດປ່ອຍຫຼວງພະບາງຈາກກຳລັງຂອງຝຣັ່ງ ໑໗ ພຶດສະພາ ໑໙໔໖ ປະເທດຝຣັ່ງຈຶ່ງຮັບຮູ້ " *ຄວາມເປັນອັນໜຶ່ງອັນດຽວ ແລະການປົກຄອງຕົນເອງ* " ຂອງ ອານາຈັກລາວ.

ວັນທີ ໑໕ ພຶດສະພາ໑໙໔໗ ເຈົ້າຊີວິດຫຼວງພະບາງ ສີສວ່າງວົງສ໌ ໄດ້ມີຈົດໝາຍສະບັບໜຶ່ງເຖິງທ່ານຜູ້ສຳເຣັດຣາຊະການຝຣັ່ງແຫ່ງປະເທດລາວຢູ່ວຽງຈັນ ເພື່ອສະເໜີໃຫ້ " *ປະເທດຝຣັ່ງມີຄວາມຈິງໃຈປັບປຸງການເຕົ້າໂຮມລາວ* " ໃນນັ້ນໃຫ້ຍົກເລີກການໃຫ້ສິດອຳນາດພິເສດແກ່ທ້ອງຖິ່ນທັງໝົດ ແລະໃຫ້ ບູຣະນະຄືນເຖິງການເອົາປະເທດທັງໝົດໃຫ້ຄືນສະຖານະພາບເໝືອນເດີມ ດັ່ງໃນປະຫວັດສດ ອານາຈັກລ້ານຊ້າງຜ່ານມາ.

ໃນວັນທີ ໑໘ ມິຖຸນາ ໑໙໔໖ ທ່ານຈອມພົນ ແທຣີ ອາກຊັງ ລີເອີ ຜູ້ສຳເລັດ ຣາຊະການ ອິນດູຈີນ ທີ່ໄຊ່ງ່ອນຈຶ່ງມີດຳຣັດໃຫ້ແກພະເຈົ້າສຣີສວ່າງວົງສ໌ ເຕົ້າໂຮມບັນດາຊົນຊາດຊົນເຜົ່າທັງໝົດ ***" ຂອງປະຊາຊາດລາວແຕ່ເໜືອຕະຫຼອດໃຕ້ປະກາດຕໍ່ໂລກວ່າ ປະເທດລາວເປັນປະເທດອັນໜຶ່ງອັນດຽວ ".*** ທ່ານຈອມພົນ ໄດ້ແນະນຳເປັນຄວາມຄັກວ່າ*:* ***" ເປັນວິທີການອັນດຽວ ທີ່ໄດ້ຮັບຜົນ ເພື່ອຫຼີກເວັ້ນກໍລະນີຜິດພາດ ອຳນາດພິເສດຂອງທ້ອງຖິ່ນ ".*** ໃນທີ່ສຸດ ເຈົ້າຫຼວງພະບາງ ຈຶ່ງຮັບຮູ້ໃນດຳຣັດດັ່ງກ່າວ ແລະເປັນສາຍເຫດໃຫ້ມີການກໍ່ຕັ້ງ ສະພາຮ່າງຣັດຖະທັມມະນູນລາວຂຶ້ນໃນປີ ໑໙໔໗. ຂໍ້ດຳຣັດດັ່ງກ່າວ ຍັງໃຫ້ພະມະຫາກະສັດຮຽກຮ້ອງມາຍັງປະຊາຊົນລາວທຸກທົ່ວໜ້າໃນປະເທດລາວ ໃຫ້ຮັບຮູ້ໃນພະຣາຊະປະສົງ

ອັນແຮງກ້າ ເພື່ອໂຮມເອົາພາກຕ່າງໆຂອງເມືອງລາວເຂົ້າເປັນອັນໜຶ່ງອັນດຽວ ພາຍໃຕ້ກົດໝາຍ ຣັດຖະທັມມະນູນ ທີ່ທາງຣາຊະການພະຣາຊະອານາຈັກລາວຮັບຮອງໄວ້ ແລະອີກປະການໜຶ່ງ ກໍເພື່ອລົບລ້າງການເມືອງຂອງທ້ອງຖິ່ນຕ່າງໆລົງ.

ແນວຄິດໂຮມປະເທດລາວເປັນອັນໜຶ່ງອັນດຽວ ພາຍໃຕ້ລະບອບການປົກຄອງອັນດຽວເປັນຜົນສະທ້ອນໃຫ້ມີສຽງກ້ອງຂຶ້ນມາຈາກອົງການນຳຕ່າງໆຂອງປະເທດຝຣັ່ງ ຫຼາຍກວ່າໃນບັນດາຜູ້ນຳລາວ. ບາງແນວຄິດໄດ້ໃຫ້ຕັ້ງສະຫະພັນລາວຂຶ້ນ ແຕ່ເມື່ອຢັ່ງສຽງເບິ່ງແລ້ວ ເຫັນວ່າເປັນໄປໄດ້ຍາກ ໝາຍຄວາມວ່າ ກ່ອນຈະເປັນສະຫະພັນອັນດຽວນັ້ນ ຕ້ອງໃຫ້ລະດັບຂອງປະຊາຊົນແຕ່ລະແຂວງ ຕ້ອງຢູ່ໃນລະດັບດຽວໃນທຸກດ້ານ ເຊິ່ງໃນກໍລະນີດັ່ງກ່າວເຫັນວ່າຍັງເປັນໄປໄດ້ຍາກ ທີ່ຕ້ອງມີລະດັບການປົກຄອງເທົ່າທຽມກັນເຊັ່ນ : ກໍລະນີສະພາບຂອງອານາຈັກຫຼວງພະບາງ ທີ່ມີອຳນາດປົກຄອງຕ່າງຫາກ ແລະກໍລະນີບັນດາແຂວງຕ່າງໆທີ່ປົກຄອງໂດຍກົງຈາກຝຣັ່ງ ( ເມືອງຈຳປາສັກ ແລະ ເມືອງອື່ນໆ ) ຕ້ອງມີສະພາບທາງເສດຖະກິດທີ່ສະໝ່ຳສະເໝີກັນ ແຕ່ສະພາບເສດຖະກິດບັນດາແຂວງທາງພາກໃຕ້ພັດອຸດົມສົມບູນກົງກັນຂ້າມບັນດາເຂດແຂວງທາງພາກເໜືອ ຕໍ່ກັບຊາຍແດນຈີນ ພັດເປັນເຂດທີ່ທຸກຍາກຂາດແຄນ. ດັ່ງນັ້ນ ຈຶ່ງເຫັນວ່າ ຈະຈັດເຂົ້າເປັນວົງສະຫະພັນອັນດຽວໄດ້ຍາກ. ດັ່ງນັ້ນ ລັດສະຫະພັນຂອງລາວທີ່ຈັດຂຶ້ນໃນເງື່ອນໄຂ ທີ່ມີຄວາມກ້າວໜ້າ ແລະຫຼ້າຫຼັງຫຼຸດໂຕນກັນດັ່ງນີ້ ຕ້ອງເກີດອຳນາດຜະເດັດການຈາກເຂດແຂວງທີ່ອຸດົມສົມບູນກວ່າແນ່ນອນ. ການລວມລາວໃຫ້ເປັນອັນໜຶ່ງອັນດຽວກັນທີ່ພໍເປັນໄປໄດ້ນັ້ນ ແມ່ນການນຳພາປະເທດໄປສູ່ຣັດທີ່ມີຄວາມກ້ຳເກິ່ງກັນ ສາມາດປ້ອງກັນຕົນເອງໄດ້ຢ່າງແຂງແຮງ ແລະສາມາດສ້າງຕົນເອງໃຫ້ເກີດດອກອອກຜົນ ( P.Sebel de chateauvieux "Gommentaire sur la coustitution Laotienne dans l 'Assemblee coustituante Laotienne, Saigon 1949 P .13 -14 ).

ເພື່ອເປັນການລະງັບ ***" ເຫດການທີ່ຈະເກີດຄວາມບໍ່ດີບໍ່ງາມຈາກອຳນາດທ້ອງຖິ່ນ "*** ທີ່ເຈົ້າບຸນອູ້ມ ເປັນຜູ້ສືບເຊື້ອພະວົງມາຈາກເຈົ້າສອ້ຍສີສະໝຸດ ເປັນຜູ້ຕາງໜ້າຣາຊະວົງຈຳປາສັກ ທັງເປັນຜູ້ສືບຣາຊະທາຍາດແຫ່ງບັນລັງ ນະຄອນກາລະຈຳບາກນາຄະບູຣສຣີ ຈຶ່ງຍອມຮັບໃນວັນທີ ໒໗ ສິງຫາ ໑໙໔໖ ເພື່ອມອບອຳນາດແຫ່ງຄວາມເປັນກະສັດທັງໝົດໃນ ໑໕ ຊົ່ວໂມງ ໂດຍຜ່ານມາຫຼາຍຮ້ອຍປີ ຈົນເປັນທີ່ນັບຖືຂອງປະຊົນທັງໝົດ ໃຫ້ຂຶ້ນກັບ ພະບາດສົມເດັດພະເຈົ້າສີສວ່າງວົງສ໌ ເຈົ້າແຜ່ນດິນນະຄອນຫຼວງພະບາງ . ການເສຽສະຫຼະຂອງພະອົງຄັ້ງນີ້ ເຮັດໃຫ້ການແຕກແຍກຂອງອານາຈັກລ້ານຊ້າງມາໄດ້ ໔໓໕ ປີຜ່ານມາກັບຄືນມາໂຮມກັນເປັນເມືອງລາວອັນໜຶ່ງອັນດຽວໄດ້ອີກ .

ແຕ່ເຈົ້າບຸນອູ້ມບໍ່ເຄີຍຮັບກຽດເປັນກະສັດຈັກເທື່ອ ແຕ່ເປັນຜູ້ກວດກາຣາຊະການແຜ່ນດິນ ເປັນບຸກຄົນທີ ໓ ຂອງຣາຊະອານາຈັກໃນລະບົບສົມບູນຍັດຕິຍະຣາຊ ຮອງຈາກອົງມົງກຸດຣາຊະກຸມມານ ພ້ອມນັ້ນ ກໍເປັນຜູ້ທີ່ປະຊາຊົນລາວໃຕ້ເທີດທູນບູຊາດັ່ງທີ່ພະອົງເຄີຍເປັນມາແລ້ວ. ຊຶ່ງແມ່ນໃນງານປະເພນີສຳຄັນທີ່ວັດພູ ຫຼື ທີ່ພະຣາຊະວັງຂອງພະອົງທີ່ບ້ານດອນຕະຫຼາດ ກໍມີພິທີບາສີທາງການອັນມີບັນດາທູດ

ຕ່າງປະເທດເຂົ້າຮ່ວມຄືກັນ ( ທູດອາເມຣິກາ ຣັດເຊຍ ຈີນ.... ) ບາງເທື່ອກໍເຫັນພະອົງລົງຈາກລົດຍ່າງເລາະຕະຫຼາດເຊົ້າເມືອງປາກເຊ ຫຼືບາງເທື່ອ ກໍແວ່ດື່ມເຫຼົ້າທີ່ຮ້ານເຫຼົ້າຄ້າຍທະຫານຝຣັ່ງປະຈຳປາກເຊ. ດັ່ງນັ້ນ ຈຶ່ງເຫັນໄດ້ວ່າ ເຈົ້າບຸນອູ້ມກໍຍັງເປັນບຸນອູ້ມຜູ້ສະຫງ່າຜ່າເຜີຍ ແລະມີຣາຊະອະທິປະໄຕຂອງພະອົງໃນຂອບເຂດດິນໄຮ່ດິນນາຂອງພະອົງຄືເກົ່າ.